ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--===0000===--

<u>ສໍານັກງານນາຍົກລັດຖະມົນຕີ</u>

ເລກທີ : 80 /ນຍ.

ນະຄອນຫລວງວຽງຈັນ, ວັນທີ 8-06-2004

# ດໍາລັດ

## ວ່າດ້ວຍການປະກາດໃຊ້ຕາຕະລາງການຫລຸດ ແລະ ລົບລ້າງພາສີສິນຄ້າກະສິກໍາ ຫມວດ 01ຫາ 08 ສໍາລັບໂຄງການສ້າງຜົນປະໂຫຍດທາງເສດຖະກິດການຄ້າເບື້ອງຕົ້ນ(Early Harvest Programme) ໃນສັນຍາຂອບການຮ່ວມມືເສດຖະກິດຢ່າງຮອບດ້ານ ລະຫວ່າງ ອາຊຽນ ແລະ ສປ ຈີນ.

- ອີງຕາມກົດຫມາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ.
- ອີງຕາມສານປະກາດໃຫ້ສັດຕະຍາບັນຂອງປະທານປະເທດແຫ່ງ ສປປລາວ ສະບັບລົງວັນທີ 08 ມັງກອນ 2004, ປະກາດໃຫ້ສັດຕະຍາບັນແກ່ສັນຍາຂອບການຮ່ວມມືດ້ານເສດຖະກິດຢ່າງຮອບດ້ານລະຫວ່າງອາຊຽນ ແລະ ສປ ຈີນ, ຊຶ່ງໄດ້ລົງນາມທີ່ ພະນົມເປັນ, ປະເທດກໍາປູເຈຍ, ໃນວັນທີ 04 ພະຈິກ 2002.
- ເຫັນຕາມການສະເຫນີຂອງລັດຖະມົນຕີວ່າການກະຊວງການຕ່າງປະເທດ ສະບັບເລກທີ 2740/ຕປທ.ສກ 03, ລົງວັນທີ 11/05/2004.

## ນາຍົກລັດຖະມົນຕີ ອອກດໍາລັດ :

ມາດຕາ 01 : ປະກາດໃຊ້ຕາຕະລາງການຫລຸດ ແລະ ລົບລ້າງພາສີສິນຄ້າກະສິກໍາ ຫມວດ 01ຫາ 08 ສໍາລັບໂຄງການສ້າງຜົນປະໂຫຍດທາງເສດຖະກິດການຄ້າເບື້ອງຕົ້ນ(Early Harvest Programme) ໃນສັນຍາຂອບ ການຮ່ວມມືເສດຖະກິດຢ່າງຮອບດ້ານລະຫວ່າງ ອາຊຽນ ແລະ ສປ ຈີນ ຕາມຕາຕະລາງທີ່ໄດ້ຄັດຕິດມາພ້ອມນີ້.

ມາດຕາ 02 : ຕາຕະລາງການຫລຸດ ແລະ ລົບລ້າງພາສີ ປະກອບດ້ວຍສິນຄ້າກະສິກໍາ 8 ຫມວດ, ຫມວດ 1 ຫາ 8 ; ເຊິ່ງໃນນີ້ມີ :

- ມີລາຍການສິນຄ້າທັງຫມົດ 209 ລາຍການ, ໃນນີ້ມີສິນຄ້າ ຈໍານວນ 56 ລາຍການຖືກຍົກເວັ້ນຕາມສາລະບານອັດຕາພາສີຂາເຂົ້າ ທີ່ປະກາດໃຊ້ໂດຍດໍາລັດເລກທີ 12/ນຍ, ລົງວັນທີ 13 ກຸມພາ 1995; ແລະ ມີສິນຄ້າຈໍານວນ 509 ລາຍການ, ໃນນີ້ມີສິນຄ້າ

ຈຳນວນ 112 ລາຍການຖືກຍົກເວັ້ນຕາມປື້ມສາລະບານອັດຕາພາສີລະບົບເອກະພາບອາຊຽນ ທີ່ປະກາດໃຊ້ໂດຍດຳລັດເລກທີ 120/ນຍ,ລົງວັນທີ 14/07/2003.

- ຕາຕະລາງການຫລຸດ ແລະ ລົບລ້າງພາສີດັ່ງກ່າວນີ້ນຳໃຊ້ສາລະບານອັດຕາພາສີລະບົບເອກະພາບອາຊຽນ (AHTN).

- ການຈັດຕັ້ງປະຕິບັດການຫລຸດ ແລະ ລົບລ້າງພາສີ ໃນຂອບໂຄງການສ້າງຜົນປະໂຫຍດເບື້ອງຕົ້ນ ພາຍໃນໄລຍະເວລາ 03 ປີ ( ສປປ ລາວ ເລີ່ມປີ 2006 ແລະ ໃຫ້ສຳເລັດໃນປີ 2008)

- ສ່ວນລາຍການສິນຄ້າທີ່ບໍ່ໄດ້ຢູ່ໃນການຫລຸດ ແລະ ລົບລ້າງພາສີ ໃນຂອບໂຄງການສ້າງຜົນປະໂຫຍດເບື້ອງຕົ້ນແມ່ນໃຫ້ເອົາໄປປະຕິບັດໃນຕາຕະລາງຫລຸດຜ່ອນ ແລະ ລົບລ້າງອັດຕາພາສີທົ່ວໄປໃນສັນຍາຂອບການຮ່ວມມືເສດຖະກິດຢ່າງຮອບດ້ານລະຫວ່າງອາຊຽນແລະ ສປ ຈີນ.

ມາດຕາ 03 : ມອບໃຫ້ກະຊວງການເງິນປະກາດໃຊ້ ແລະ ນຳໄປຈັດຕັ້ງປະຕິບັດໃຫ້ເປັນເອກະພາບກັນໃນທົ່ວປະເທດ, ໂດຍສະເພາະໂຄງການສ້າງຜົນປະໂຫຍດເບື້ອງຕົ້ນ ທີ່ ສປ ຈີນຈະໄດ້ປະຕິບັດແກ່ ສປປລາວ ເຊິ່ງມີຜົນບັງຄັບໃຊ້ປະຕິບັດ ແຕ່ວັນທີ 01/01/2004.

ມາດຕາ 04 : ດຳລັດສະບັບນີ້ ມີຜົນສັກສິດຍ້ອນຫລັງເລີ່ມແຕ່ວັນທີ : 01/01/2004 ເປັນຕົ້ນມາ.

**ນາຍົກລັດຖະມົນຕີ ແຫ່ງ ສ ປ ປ ລາວ**

